**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 0724 /ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 21/03/2022

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 1/2022

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍລະບຽບການລາຍງານ ແລະການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/LSX, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (“ບໍລິສັດ”) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 1/2022, ວັນທີ 18 ມີນາ 2022, ມີລາຍລະອຽດລຸ່ມນີ້:

1. ອະນຸມັດບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ລວມທັງບົດລາຍງານການເງິນຂອງບໍລິສັດ ປີ 2021 ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ເພື່ອພິຈາລະນາຮັບຮອງ.
2. ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານຄື: ປ່ຽນຊື່ ແລະ ຂໍ້ມູນຂອງສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າທີ່ຄົບອາຍຸການ, ຜູ້ທີ່ໄປຮັບໜ້າທີ່ໃໝ່ ແລະ ຜູ້ທີ່ໄດ້ຮັບການແຕ່ງຕັ້ງຄືນໃໝ່.

ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວ ມີຄຳແນະນຳ ແລະ/ຫຼື ຄຳສັ່ງໃຫ້ດັດແກ້. ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ເພື່ອພິຈາລະນາຮັບຮອງ.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

**ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່**

ພະລັງງານ ແລະ ບໍ່ແຮ່ ກະຊວງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ນະຄອນ ຫຼວງ ວຽງຈັນ

ດວງສີ ພາຣາຍົກ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la